ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 4143 /ກປ

ນະຄອນຫຼວງວຽງຈັນ, ວັນທີ 03 OCT 2023

# ຄຳແນະນຳ
# ກ່ຽວກັບ ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 4548/ກປມ, ລົງວັນທີ 15 ກັນຍາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ຄັ້ງວັນທີ 18 ກັນຍາ 2023.

ໃນໄລຍະຜ່ານມາ ລັດຖະບານ ຖືເອົາວຽກງານປົກປັກຮັກສາປ່າໄມ້ ເປັນຄວາມຮັບຜິດຊອບຂອງປວງຊົນລາວທັງຊາດ, ຊຶ່ງຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການສ້າງລະບົບ ແລະ ດຳເນີນການວາງແຜນຄຸ້ມຄອງ, ປົກປັກຮັກສາປ່າໄມ້ ຢູ່ເຂດຄຸ້ມຄອງຂອງບ້ານ ໃຫ້ອຸດົມສົມບູນ ຕາມທິດສີຂຽວ ແລະ ຍືນຍົງ; ຄຽງຄູ່ກັນນັ້ນ, ກໍ່ຍັງມີບາງບັນຫາທີ່ກົດໝາຍ ແລະ ນິຕິກຳ ຍັງບໍ່ທັນກຳນົດລະອຽດ, ໂດຍສະເພາະການຈັດຕັ້ງປະຕິບັດຂອງບ້ານຍັງບໍ່ທັນເປັນເຈົ້າການໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນຂອບເຂດຂອງບ້ານ. ສະນັ້ນ, ເພື່ອເຮັດໃຫ້ວຽກງານຄຸ້ມຄອງປ່າໄມ້ຂັ້ນບ້ານ ທັນເຂົ້າສູ່ລະບຽບການ ແລະ ມີຄວາມເປັນເອກະພາບກັນຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ:

### I. ຈຸດປະສົງ ແລະ ລະດັບຄາດໝາຍ

ຄຳແນະນຳສະບັບນີ້ ກຳນົດຫຼັກການ, ຂັ້ນຕອນ ການຈັດຕັ້ງປະຕິບັດວຽກງານ ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ທີ່ຢູ່ໃນ ແລະ ນອກເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ເພື່ອຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ ແນໃສ່ສ້າງຄວາມເຂັ້ມແຂງໃຫ້ອົງການປົກຄອງບ້ານ ແລະ ປະຊາຊົນ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້, ປູກ ແລະ ຟື້ນຟູບູລະນະປ່າໄມ້ ໃຫ້ມີຄວາມອຸດົມສົມບູນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### II. ຄວາມໝາຍ ແລະ ຄວາມສຳຄັນ

ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ແມ່ນການຈັດສັນປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດການປົກຄອງຂອງບ້ານ ຊຶ່ງດຳເນີນທັງຢູ່ໃນ ແລະ ນອກເຂດປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ, ເພື່ອໃຫ້ອົງການປົກຄອງບ້ານ ແລະ ປະຊາຊົນ ເປັນເຈົ້າການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ໃນເຂດຄຸ້ມຄອງຂອງບ້ານໃຫ້ມີຄວາມອຸດົມສົມບູນ ເປັນບ່ອນທຳມາຫາກິນ ແລະ ນຳໃຊ້ຂອງປະຊາຊົນ ໂດຍບໍ່ປົກແຫ້ງ, ສ້າງລາຍຮັບໃຫ້ແກ່

ປະຊາຊົນ ແລະ ກາຍເປັນບ້ານທີ່ມີຄວາມເຂັ້ມແຂງ ໃນການຄຸ້ມຄອງປົກປັກຮັກສາປ່າໄມ້ ຫຼື ເອີ້ນວ່າ **"ບ້ານພັດທະນາດ້ານປ່າໄມ້"**.

## III. ຫຼັກການ ແລະ ຂັ້ນຕອນ ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ

### 3.1 ຫຼັກການ

1) ຮັບປະກັນ ການຈັດສັນຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດຄຸ້ມຄອງຂອງບ້ານ ທັງຢູ່ໃນ ແລະ ນອກເຂດປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
2) ສອດຄ່ອງກັບ ສະພາບເສດຖະກິດ-ສັງຄົມ, ວັດທະນະທຳ ແລະ ສິ່ງແວດລ້ອມຂອງບ້ານ ກໍຄືແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ;
3) ຮັບປະກັນ ຜົນປະໂຫຍດອັນຊອບທຳ ຂອງ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລັດໄດ້ມອບປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ປົກປັກຮັກສາ ແລະ ພັດທະນາ;
4) ອົງການຈັດຕັ້ງທາງສັງຄົມ ທີ່ປະກອບສ່ວນ ໃນວຽກງານ ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ;
5) ຮັບປະກັນ ການມີສ່ວນຮ່ວມຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ອົງການຈັດຕັ້ງສາກົນ.

### 3.2 ຂັ້ນຕອນ

ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ທີ່ຢູ່ໃນ ແລະ ນອກເຂດປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ແມ່ນສາມາດດຳເນີນໄດ້ທຸກບ້ານ, ຊຶ່ງປະກອບມີ 05 ຂັ້ນຕອນ ດັ່ງນີ້:

#### 1) ຂັ້ນຕອນທີ 1 ທົບທວນ ແລະ ກຳນົດ ປະເພດປ່າໄມ້ ແລະ ທີ່ດິນປ່າໄມ້

ແມ່ນການທົບທວນຄືນ ຂໍ້ມູນການວາງແຜນນຳໃຊ້ທີ່ດິນ ຂັ້ນບ້ານ ຫຼື ການມອບດິນ-ມອບປ່າ ໄລຍະຜ່ານມາ ເພື່ອກຳນົດ ປະເພດປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ຂັ້ນບ້ານປົກປັກຮັກສາ ແລະ ພັດທະນາ ຕາມທີ່ກຳນົດໄວ້ ໃນມາດຕາ 114 ຂອງກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ດັ່ງລຸ່ມນີ້:

ກ. ສົມທົບກັບຂະແໜງການ ແລະ ອົງການປົກຄອງບ້ານ, ກຽມຂໍ້ມູນການວາງແຜນນຳໃຊ້ທີ່ດິນ ແລະ ມອບດິນ-ມອບປ່າໄມ້ ໄລຍະຜ່ານມາຂອງບ້ານເປົ້າໝາຍ ໂດຍນຳໃຊ້ອຸປະກອນ ແລະ ເຄື່ອງມືທີ່ຈຳເປັນ ເຊັ່ນ: ແຜນທີ່ພູມີປະເທດ, ພາບຖ່າຍດາວທຽມ, GPS ແລະ ອື່ນໆ;

ຂ. ຈັດກອງປະຊຸມ ເຜີຍແຜ່ຄວາມໝາຍ ແລະ ຄວາມສຳຄັນ ຂອງວຽກງານຄຸ້ມຄອງປ່າໄມ້ຂັ້ນບ້ານ ພ້ອມທັງແຈ້ງຈຸດປະສົງ, ຂັ້ນຕອນ ແລະ ວິທີການດຳເນີນການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ໃຫ້ອົງການປົກຄອງບ້ານ ແລະ ປະຊາຊົນ ຮັບຮູ້ ແລະ ເຂົ້າໃຈ;

ຄ. ເກັບກຳຂໍ້ມູນສະພາບການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດຄຸ້ມຄອງຂອງບ້ານ ໄລຍະຜ່ານມາເປັນຕົ້ນ ຂໍ້ມູນເສດຖະກິດ-ສັງຄົມ ຂອງບ້ານ (ແບບພິມ ປມບ 1), ການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ (ແບບພິມ ປມບ 2), ຂໍ້ມູນສັດນ້ຳ-ສັດປ່າ (ແບບພິມ ປມບ 3) ແລະ ການນຳໃຊ້ທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນເຂດປ່າໄມ້ (ແບບພິມ ປມບ 4) ແລະ ຂໍ້ມູນອື່ນໆ ທີ່ຈຳເປັນ;

ງ. ສັງລວມ ແລະ ວິເຄາະຂໍ້ມູນ ສະພາບການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ເພື່ອໃຫ້ໄດ້ ຂໍ້ສະຫຼຸບ ຄື:

- ບ້ານທີ່ບໍ່ທັນໄດ້ດຳເນີນການວາງແຜນນຳໃຊ້ທີ່ດິນ ໃນໄລຍະຜ່ານມາ ແມ່ນໃຫ້ດຳເນີນຂະບວນການວາງແຜນນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໂດຍນຳໃຊ້ຄູ່ມື "ການວາງແຜນນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ແບບມີສ່ວນຮ່ວມ ຂັ້ນບ້ານ ແລະ ກຸ່ມບ້ານພັດທະນາ ຫຼື Participatory Land Use Planing (PLUP)" ທີ່ກະຊວງກະສິກຳ ແລະ ປ່າໄມ້ ຮັບຮອງ;
- ບ້ານທີ່ໄດ້ດຳເນີນການວາງແຜນນຳໃຊ້ທີ່ດິນ ໃນໄລຍະຜ່ານມາ ຖ້າບໍ່ມີການປ່ຽນແປງ ຫຼື ມີການປ່ຽນແປງໜ້ອຍ ໂດຍບໍ່ມີຜົນກະທົບຕໍ່ສະພາບປ່າໄມ້ ແມ່ນບໍ່ຈຳເປັນປັບປຸງແຜນນຳໃຊ້ທີ່ດິນຄືນ, ແຕ່ຖ້າສະພາບການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ມີການປ່ຽນແປງຫຼາຍ ອາດສົ່ງຜົນກະທົບຕໍ່ປ່າໄມ້ ຈະຕ້ອງປັບປຸງແຜນນຳໃຊ້ທີ່ດິນບ້ານນັ້ນຄືນໃໝ່ ບົນພື້ນຖານການເຫັນດີເປັນເອກະພາບ ຂອງປະຊາຊົນ ແລະ ການມີສ່ວນຮ່ວມຂອງຂະແໜງການ, ອົງການຈັດຕັ້ງ ທີ່ກ່ຽວຂ້ອງ;

ຈ. ແຕ້ມແຜນອາດ ສະແດງຂອບເຂດການນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຮ່ວມກັບປະຊາຊົນ ແລະ ອີງການປົກຄອງບ້ານ ກ່ຽວຂ້ອງ ເຊັ່ນ: ປ່າປ້ອງກັນ, ປ່າສະຫງວນ, ປ່າຊົມໃຊ້ຂອງບ້ານ, ດິນທໍາການຜະລິດ ຂອງປະຊາຊົນ ແລະ ດິນປະເພດອື່ນ ໃນຂອບເຂດຄຸ້ມຄອງຂອງບ້ານ ດິນໃໝ່ ໃສ່ເຈ້ຍຂະໜາດ A0 ຫຼື ເຈ້ຍໄຂມັນ ພ້ອມທັງກໍານົດແມ່ນໍ້າ ຫຼື ສາຍຫ້ວຍ, ສັນພູ, ເສັ້ນທາງ ແລະ ອື່ນໆ ທີ່ປະຊາຊົນຄຸ້ນເຄີຍເຂົ້າໃຈ;

ສ. ສ້າງແຜນທີ່ ປ່າໄມ້ ແລະ ທີ່ດິນປ່າໄມ້ ນໍາໃຊ້ຂໍ້ມູນຈາກແຜນອາດ ສະແດງຂອບເຂດການນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃນຂັ້ນໜຶ່ງ, ຂໍ້ມູນຈາກແຜນທີ່ພູມິປະເທດ, ພາບຖ່າຍດາວທຽມ, GPS ແລະ ການສໍາຫຼວດຕົວຈິງຢູ່ພາກສະໜາມ ນໍາເຂົ້າຄອມພິວເຕີ ໂດຍໃຊ້ລະບົບ GIS ແລະ ລະບົບອື່ນທີ່ເໝາະສົມ ໂດຍປະຊາຊົນພາຍໃນບ້ານ ສາມາດຮັບຮູ້ ແລະ ເຂົ້າໃຈ ເປັນຢ່າງດີ.

## 2) ຂັ້ນຕອນທີ 2 ການກໍານົດ ແລະ ໝາຍຂອບເຂດ

ແມ່ນການກໍານົດ, ໝາຍຂອບເຂດ, ຕິດປ້າຍ ແລະ ປັກຫຼັກໝາຍເຂດແດນປ່າໄມ້ ແຕ່ລະປະເພດ ເພື່ອໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຮັບຮູ້ ຕາມແຜນອາດ ຫຼື ແຜນທີ່ສະແດງ ປະເພດການນໍາໃຊ້ປ່າໄມ້ ດັ່ງລຸ່ມນີ້:

ກ. ກໍານົດຈຸດສໍາຄັນ ແລະ ຈໍາເປັນທີ່ຈະໝາຍຂອບເຂດ, ຕິດປ້າຍ ແລະ ປັກຫຼັກໝາຍຂອບເຂດປ່າ ແຕ່ລະປະເພດ. ຖ້າເງື່ອນໄຂທາງທໍາມະຊາດອໍານວຍ ໃຫ້ກໍານົດຕາມສັນພູ, ແມ່ນໍ້າ, ເສັ້ນທາງ, ຕົ້ນໄມ້ໃຫຍ່ ແລະ ອື່ນໆ;

ຂ. ຂະໜາດ ຫຼັກໝາຍ ແລະ ປ້າຍ

- ຂະໜາດຫຼັກໝາຍ ເຂດແດນແມ່ນ: ໜ້າ 12 ຊັງຕີແມັດ, ລວງຍາວ 100 ຊັງຕີແມັດ ເຮັດດ້ວຍຊີມັງ, ໂດຍລະບຸຊື່ເຂດແດນປ່າໄມ້ ແຕ່ລະປະເພດ, ການຝັງ ແມ່ນໃຫ້ພົ້ນໜ້າດິນ ໃນລະຫວ່າງ 50 ຫາ 70 ຊັງຕີແມັດ;
- ຂະໜາດປ້າຍ ມີ 2 ປະເພດຄື: (1) ປ້າຍບອກປະເພດປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດຄຸ້ມຄອງຂອງບ້ານ, ຂະໜາດຂອງປ້າຍ ໂດຍກໍານົດ ລວງກວ້າງ 120 ຊັງຕີແມັດ ຄູນ ລວງຍາວ 160 ຊັງຕີແມັດ, ຄວາມໜາ ຂຶ້ນກັບວັດຖຸທີ່ໃຊ້ ແລະ (2) ປ້າຍບອກເຂດປະເພດປ່າໄມ້ ໃນເຂດຄຸ້ມຄອງຂອງບ້ານ ຂະໜາດຂອງປ້າຍ ລວງກ້ວາງ 20 ຊັງຕີແມັດ ຄູນ ລວງຍາວ 50 ຊັງຕີແມັດ, ຄວາມໜາ ຂຶ້ນກັບວັດຖຸທີ່ໃຊ້, ເນື້ອໃນຂອງປ້າຍ ບົ່ງບອກຊື່ປະເພດປ່າ ຫຼື ເຂດອະນຸລັກຕ່າງໆ;
- ຈໍານວນ ຫຼັກໝາຍ ແລະ ປ້າຍ ແມ່ນຂຶ້ນກັບການກໍານົດຈຸດທີ່ມີຄວາມສ່ຽງຕໍ່ການບຸກລຸກ ແລະ ບ່ອນທີ່ມີເງື່ອນໄຂທາງທໍາມະຊາດອໍານວຍ ໃຫ້ກໍານົດຕາມສັນພູ, ແມ່ນໍ້າ, ເສັ້ນທາງ, ຕົ້ນໄມ້ໃຫ່ຍ ແລະ ອື່ນໆ ເປັນເຂດແດນ ໂດຍບໍ່ຈໍາເປັນປັກຫຼັກໝາຍເຂດແດນຕື່ມອີກ.

ຄ. ການປັກຫຼັກໝາຍ ແລະ ຕິດປ້າຍ ຂອບເຂດປ່າໄມ້ ແຕ່ລະປະເພດ ຕາມຈຸດທີ່ກໍານົດ ໂດຍນໍາໃຊ້ທ່າແຮງແຕ່ລະບ້ານ ແລະ ຕອບສະໜອງງົບປະມານໃຫ້ບ້ານຕາມ ແຮງງານ, ວັດຖຸຮັບໃຊ້, ພາຫະນະຂົນສົ່ງ ແລະ ອື່ນໆ.

## 3) ຂັ້ນຕອນທີ 3 ການຂຽນແຜນ ແລະ ຮັບຮອງແຜນ

ແມ່ນການຂຽນແຜນກິດຈະກໍາຄຸ້ມຄອງ, ປົກປັກຮັກສາ, ຟື້ນຟູປ່າໄມ້, ການນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ແນ່ໃສ່ໃຫ້ປະຊາຊົນຮັບຮູ້ ລະບຽບການປົກປັກຮັກສາປ່າໄມ້, ການນໍາໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ ແບບຍືນຍົງ ພາຍໃນເຂດຄຸ້ມຄອງຂອງບ້ານ ແລະ ມີຄວາມເປັນເອກະພາບ ຮັບຮອງກິດຈະກໍາທີ່ໄດ້ກໍານົດໃສ່ແຜນ ເພື່ອນໍາໄປຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ດັ່ງລຸ່ມນີ້:

ກ. ການສ້າງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ຕ້ອງໃຫ້ສອດຄ່ອງຕາມຈຸດປະສົງ ແລະ ລະບຽບການຄຸ້ມຄອງປ່າໄມ້ ແຕ່ລະປະເພດ ເຊັ່ນ: ປ່າຊົມໃຊ້ຂອງບ້ານ, ປ່າສະຫງວນ ລວມມີ ປ່າສັກສິດ ແລະ ປ່າຊ້າ, ປ່າປ້ອງກັນ ລວມມີ ປ່າຍອດນໍ້າ, ປ່າແຄມນໍ້າ, ປ່າແຄມທາງ. ໃນກໍລະນີບ້ານຢູ່ໃນ ເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ທີ່ມີແຜນຈັດສັນແລ້ວ ຕ້ອງໃຫ້ສອດຄ່ອງຕາມແຜນຈັດສັນປະເພດປ່າໄມ້ນັ້ນ;

ຂ. ກໍານົດກິດຈະກໍາ ການຄຸ້ມຄອງປົກປັກຮັກສາ, ພັດທະນາປ່າໄມ້ ແລະ ນໍາໃຊ້ ແຕ່ລະປະເພດປ່າ ໂດຍອີງໃສ່ຂໍ້ມູນທີ່ເກັບກໍາໄດ້ຈາກ ການສໍາຫຼວດຕົວຈິງ ແລະ ການຕົກລົງເຫັນດີເປັນເອກະພາບ ກັບປະຊາຊົນ;

ຄ. ການຂຽນແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ໃຫ້ນໍາໃຊ້ຄໍາສັບທີ່ປະຊາຊົນເຂົ້າໃຈງ່າຍ ຫຼື ນໍາໃຊ້ຮູບພາບອະທິບາຍ ເພື່ອໃຫ້ປະຊາຊົນເຂົ້າໃຈ ແລະ ສາມາດຈັດຕັ້ງປະຕິບັດໄດ້; ສໍາລັບ ໂຄງຮ່າງ ແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ໄດ້ຕິດຄັດໃນເອກະສານຊ້ອນທ້າຍ (ແບບພິມ ປມບ 5).

ງ. ຫຼີກລ່ຽງຜົນກະທົບທາງລົບທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ ໂດຍສະເພາະ ສິດນຳໃຊ້ໄມ້, ປ່າໄມ້, ເຄື່ອງປ່າຂອງດົງ ແລະ ທີ່ດິນ ຕາມກົດໝາຍ. ໃນກໍລະນີມີຜົນກະທົບເກີດຂຶ້ນ ຕ້ອງໄດ້ຫາວິທີແກ້ໄຂໃຫ້ຖືກຕ້ອງ ສອດຄ່ອງຕາມນະໂຍບາຍ ແລະ ລະບຽບການຂອງລັດ;

ຈ. ແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ແມ່ນຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເປັນຜູ້ຮັບຮອງ ຕາມການຕົກລົງເຫັນດີຂອງອົງການປົກຄອງບ້ານ ແລະ ປະຊາຊົນ, ແຜນດັ່ງກ່າວ ກຳນົດ ຫ້າປີ ຂຶ້ນໄປ ສາມາດປັບປຸງ, ປ່ຽນແປງ ຕາມສະພາບຂອງບ້ານ ໃນແຕ່ລະໄລຍະ.

### 4) ຂັ້ນຕອນທີ 4 ການປະຕິບັດແຜນ

ແມ່ນການຈັດຕັ້ງປະຕິບັດ ກິດຈະກຳຢູ່ໃນແຕ່ລະປະເພດປ່າ ຕາມແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ແນໃສ່ປະຕິບັດກິດຈະກຳ ທີ່ຕິດພັນກັບການຊຸກຍູ້ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ຕາມທ່າແຮງຂອງແຕ່ລະບ້ານ ໂດຍຖືເອົາປະຊາຊົນເປັນເຈົ້າການ ໃນການຈັດຕັ້ງປະຕິບັດກິດຈະກຳ ພ້ອມທັງປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ ໃນການຄຸ້ມຄອງປົກປັກຮັກສາ, ປູກ, ຟື້ນຟູປ່າໄມ້ ແລະ ປ້ອງກັນການທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ດັ່ງລຸ່ມນີ້:

**ກ. ວຽກງານຄຸ້ມຄອງ ແລະ ປົກປັກຮັກສາ**

- ສ້າງ ແລະ ປັບປຸງ ລະບຽບການຄຸ້ມຄອງ, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງບ້ານ (ແບບພິມ ປມບ 6);
- ໂຄສະນາເຜີຍແຜ່ ນະໂຍບາຍ ແລະ ນິຕິກຳ ກ່ຽວກັບ ການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ລວມທັງລະບຽບການຄຸ້ມຄອງ ແລະ ນຳໃຊ້ປ່າໄມ້ ຂອງບ້ານ;
- ຕິດປ້າຍ ແລະ ປັກຫຼັກໝາຍ ໃນເຂດທີ່ດຳເນີນກິດຈະກຳ ແຕ່ລະປະເພດປ່າໄມ້ ແລະ ທີ່ດິນປ່າໄມ້ ເຊັ່ນ: ເຂດປູກໄມ້ ແລະ ເຄື່ອງປ່າຂອງດົງ, ເຂດຄຸ້ມຄອງ ນຳໃຊ້ ເຄື່ອງປ່າຂອງດົງ ແລະ ຕິດປ້າຍ, ປັກຫຼັກໝາຍ ເພີ່ມໃນຈຸດທີ່ເຫັນວ່າມີຄວາມສ່ຽງ ຕໍ່ການບຸກລຸກປ່າໄມ້ ແລະ ທີ່ດິນປ່າໄມ້ຂອງບ້ານ;
- ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດການເງິນບ້ານ ຫຼື ກຸ່ມປົກປັກຮັກສາປ່າໄມ້ ເພື່ອເຮັດໜ້າທີ່ຄຸ້ມຄອງປົກປັກຮັກສາ ເຂດສະຫງວນ ລວມມີ ປ່າສັກສິດ ແລະ ປ່າຊ້າ, ເຂດປ່າປ້ອງກັນ ລວມມີ ປ່າຍອດນ້ຳ, ປ່າແຄມນ້ຳ, ປ່າແຄມທາງການປ້ອງກັນໄຟໄໝ້ລາມປ່າ ໃນເຂດປົກຄອງຂອງບ້ານ (ຖ້າມີເງື່ອນໄຂ ກໍເຮັດສັນຍາປົກປັກຮັກສາປ່າກັບປະຊາຊົນ);
- ກຳນົດຈຸດ ແລະ ແລວກວດກາລາດຕະເວນ ເຂດປ່າໄມ້ ທີ່ມີຄວາມສ່ຽງ ເພື່ອປ້ອງກັນ ແລະ ສະກັດກັ້ນການບຸກລຸກທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
- ສ້າງແລວປ້ອງກັນໄຟໄໝ້ລາມປ່າ ເຂດທີ່ມີຄວາມສ່ຽງໄຟໄໝ້ລາມປ່າ, ມີການກວດກາລາດຕະເວນເປັນປະຈຳ ໃນຊ່ວງລະດູແລ້ງ ແລະ ພ້ອມທັງອະນາໄມຖາກຖາງຕາມແລວປ້ອງກັນໄຟປີລະຄັ້ງ.

**ຂ. ວຽກງານພັດທະນາປ່າໄມ້**

- ກຳນົດເນື້ອທີ່ປູກໄມ້ ເພື່ອຮັກສາສິ່ງແວດລ້ອມ ແລະ ເຂດສາທາລະນະ ໃຫ້ດຳເນີນໃນເຂດປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ໃນປ່າປ້ອງກັນ ແລະ ປ່າສະຫງວນ. ການປູກໄມ້ໃນເຂດນີ້ ບໍ່ອະນຸຍາດໃຫ້ຂຸດຄົ້ນ ແລະ ນຳໃຊ້ ເພື່ອເປົ້າໝາຍທາງດ້ານການຄ້າ (ຂໍ້ 2 ມາດຕາ 60 ຂອງກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019);
- ກຳນົດເນື້ອທີ່ປູກໄມ້ ເພື່ອເປັນສິນຄ້າ ໃຫ້ດຳເນີນ ໃນເຂດປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນໃນເຂດປ່າຜະລິດ ຫຼື ທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໄດ້ໃຫ້ສິດນຳໃຊ້ທີ່ດິນ (ຂໍ້ 1 ມາດຕາ 60 ຂອງກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019). ໄມ້ທີ່ປູກເປັນກຳມະສິດຂອງຜູ້ປູກ ຫຼື ຜູ້ລົງທຶນປູກ (ວັກ 2 ມາດຕາ 4 ຂອງກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019);
- ກຳນົດເນື້ອທີ່ປູກ ແລະ ຟື້ນຟູ ເຄື່ອງປ່າຂອງດົງ ໃຫ້ດຳເນີນ ໃນປ່າປ້ອງກັນ ແລະ ປ່າສະຫງວນ ໃນເຂດຄຸ້ມຄອງການນຳໃຊ້. ເຄື່ອງປ່າຂອງດົງ ທີ່ປູກ ແລະ ຟື້ນຟູ ສາມາດນຳໃຊ້ໄດ້ ແຕ່ບໍ່ໃຫ້ສົ່ງຜົນກະທົບຕໍ່ແຫຼ່ງນ້ຳ, ຊີວະນາໆພັນ ແລະ ສິ່ງແວດລ້ອມ (ຂໍ້ 3, ມາດຕາ 60 ຂອງກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019);

- ການກຳນົດເນື້ອທີ່ຟື້ນຟູປ່າໄມ້ ແລະ ລະບົບການຟື້ນຟູ ຕາມສະພາບການຊຸດໂຊມຂອງປ່າ ເຊັ່ນ: ທີ່ດິນປ່າປອກໂຫຼ້ນ, ທີ່ດິນປ່າຊຸດໂຊມ ແລະ ປ່າເຫຼົ່າ ໃຫ້ດຳເນີນຕາມ "ຄູ່ມືແນະນຳ ການຟື້ນຟູປ່າໂດຍປະຊາຊົນເປັນເຈົ້າ" ທີ່ກົມປ່າໄມ້ ພິຈາລະນາຮັບຮອງ ປີ 2021.

**ຄ. ວຽກງານການນຳໃຊ້ໄມ້ ແລະ ທີ່ດິນປ່າໄມ້**

- ການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອສາທາລະນະປະໂຫຍດ, ເພື່ອຄອບຄົວ ແລະ ຕາມປະເພນີ ເຊັ່ນ: ນຳໃຊ້ໃນເຂດປ່າຊົມໃຊ້ຂອງບ້ານ, ເຂດຄຸ້ມຄອງການນຳໃຊ້ ປ່າປ້ອງກັນ ແລະ ປ່າສະຫງວນ ໃຫ້ຖືກຕ້ອງຕາມ ທີ່ໄດ້ກຳນົດໄວ້ໃນມາດຕາ 62, 63 ແລະ 64 ຂອງກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອທຸລະກິດ ໃຫ້ດຳເນີນໃນເຂດປ່າໄມ້ທີ່ ລັດ ຈັດສັນໃຫ້ບ້ານນຳໃຊ້, ເຂດເນື້ອທີ່ດິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລັດໄດ້ມອບສິດນຳໃຊ້ທີ່ດິນໃຫ້ຢ່າງຖືກຕ້ອງ ຕາມມາດຕາ 65 ຂອງກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ສ້າງສັນຍາ ການປູກໄມ້, ເຄື່ອງປ່າຂອງດົງ ແລະ ຟື້ນຟູປ່າ (ແບບພິມ ປມບ 7) ເພື່ອເປັນເອກະສານຢັ້ງຢືນສິດນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ ທີ່ປະຊາຊົນປູກ ແລະ ຟື້ນຟູ ຕາມ ກົດໝາຍ ແລະ ລະບຽບການ;
- ຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນ ໄມ້ປູກ ພາຍໃນບ້ານ ຕາມຄຳແນະນຳ ສະບັບເລກທີ 2492/ກປ, ລົງວັນທີ 23 ທັນວາ 2020;
- ຂຶ້ນບັນຊີຕົ້ນໄມ້ປູກ, ໄມ້ທຳມະຊາດ ທີ່ມີໃນທີ່ດິນນາ, ທີ່ດິນສວນ, ທີ່ດິນປຸກສ້າງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນບ້ານ ເພື່ອຢັ້ງຢືນກຳມະສິດ ແລະ ແຫຼ່ງທີ່ມາຂອງໄມ້ ແລະ ເຄື່ອງປ່າຂອງດົງທີ່ປູກ, ອຳນວຍຄວາມສະດວກໃນການ ຄຸ້ມຄອງ, ປົກປັກຮັກສາ ແລະ ປະຕິບັດນະໂຍບາຍສົ່ງເສີມການປູກ ຕາມດຳລັດ ສະບັບເລກທີ 247/ນຍ, ລົງວັນທີ 20 ສິງຫາ 2019 ແລະ ຄຳແນະນຳ ສະບັບເລກທີ 3684/ກປ, ລົງວັນທີ 16 ສິງຫາ 2022;
- ບ້ານ ທີ່ມີທ່າແຮງດ້ານການຜະລິດ ເຄື່ອງປ່າຂອງດົງ ທີ່ເປັນສິນຄ້າ ໃຫ້ສຳຫຼວດ, ເກັບກຳຂໍ້ມູນ ເພື່ອສະເໜີຂັ້ນເທິງ ອອກອະນຸຍາດຂຸດຄົ້ນຕາມລະບຽບການ ແລະ ຊຸກຍູ້ຈັດຕັ້ງກຸ່ມ ການປູກ, ເກັບກູ້, ປຸງແຕ່ງເປັນຜະລິດຕະພັນ ແລະ ການຕະຫຼາດ ເພື່ອສ້າງລາຍຮັບໃຫ້ປະຊາຊົນ;
- ການຕັດໄມ້ປູກ ເພື່ອໃຊ້ໃນຄອບຄົວ ແລະ ສາທາລະນະປະໂຫຍດ ຕ້ອງໄດ້ເກັບກຳຂໍ້ມູນ ຈຳນວນບໍລິມາດໄມ້ ຫຼື ນ້ຳໜັກຂອງໄມ້ ລາຍງານໃຫ້ອົງການປົກຄອງບ້ານ;
- ການຕັດໄມ້ປູກ ເພື່ອເປັນສິນຄ້າ ກ່ອນຈະຕັດ ໃຫ້ນຳເອົາໃບທະບຽນປ່າປູກ ຫຼື ໃບຢັ້ງຢືນໄມ້ປູກ ເພື່ອຢັ້ງຢືນກຳມະສິດ ພ້ອມທັງລາຍງານ ແລະ ແຈ້ງສະຖານທີ່, ຊະນິດພັນໄມ້, ຈຳນວນຕົ້ນ ທີ່ຈະຕັດ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ;
- ສຳລັບການນຳໃຊ້ທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນເຂດປ່າໄມ້ ເຊັ່ນ: ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ໃຫ້ປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນກ່ຽວກັບ ການນຳໃຊ້ທີ່ດິນ ຫຼື ສິດນຳໃຊ້ທີ່ດິນ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນັ້ນ ເພື່ອຈັດສັນ, ອອກໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ຂຶ້ນທະບຽນອອກໃບຕາດິນ ໃຫ້ພວກກ່ຽວ ຕາມກົດໝາຍ ແລະ ລະບຽບການ.

**5) ຂັ້ນຕອນທີ 5 ການກວດກາຕິດຕາມ ການປະຕິບັດແຜນ**

ເພື່ອໃຫ້ກິດຈະກຳ ທີ່ໄດ້ກຳນົດໃນແຜນສາມາດດຳເນີນ ການຈັດຕັ້ງປະຕິບັດຕາມຄາດໝາຍ ແລະ ມີປະສິດທິພາບ ໂດຍໃຫ້ອົງການປົກຄອງບ້ານ ເປັນເຈົ້າການຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູປ່າໄມ້ ທີ່ຊຸດໂຊມ, ຕ້ານ ຫຼື ສະກັດກັ້ນໄຟໄໝ້ປ່າ, ການບຸກລຸກປ່າໄມ້ ແລະ ທີ່ດິນປ່າໄມ້ ແນໃສ່ເຮັດໃຫ້ປ່າໄມ້ ໃນເຂດຄຸ້ມຄອງຂອງບ້ານ ມີຄວາມອຸດົມສົມບູນ, ມີການນຳໃຊ້ຊັບພະຍາກອນປ່າໄມ້ ແບບຍືນຍົງ, ຖືກຕ້ອງຕາມລະບຽບການ ແລະ ກາຍເປັນບ້ານພັດທະນາດ້ານປ່າໄມ້ ຕ້ອງມີການກວດກາຕິດຕາມ ດັ່ງລຸ່ມນີ້:

ກ. ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດການເງິນບ້ານ ຫຼື ກຸ່ມປົກປັກຮັກສາປ່າໄມ້ ທີ່ໄດ້ແຕ່ງຕັ້ງຂຶ້ນ ປະຕິບັດສິດ ແລະ ໜ້າທີ່ ໃນການຕິດຕາມ ຕ້ານ ແລະ ສະກັດກັ້ນ ການບຸກລຸກປ່າໄມ້ ແລະ ທີ່ດິນປ່າໄມ້ ເຊັ່ນ: ການລັກລອບຕັດໄມ້, ຈູດປ່າ ແລະ ການກະທຳທີ່ເປັນການທຳລາຍປ່າໄມ້ ແລ້ວລາຍງານໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຢ່າງທັນເຫດການ;

ຂ. ຕິດຕາມກວດກາ ການປະຕິບັດແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ເປັນຕົ້ນ: (1) ວຽກຄຸ້ມຄອງ ແລະ ປົກປັກຮັກສາ ເຊັ່ນ: ເຜີຍແຜ່ກົດໝາຍ, ລະບຽບການຄຸ້ມຄອງ ແລະ ນຳໃຊ້ປ່າໄມ້ຂັ້ນບ້ານ, (2) ວຽກພັດທະນາ ເຊັ່ນ: ຟື້ນຟູປ່າໄມ້ ແລະ ເຄື່ອງປ່າຂອງດົງ, (3) ການນຳໃຊ້ ໄມ້ ແລະ ເຄື່ອງປ່າຂອງດົງ ເຊັ່ນ: ການນຳໃຊ້ເພື່ອສາທາລະນະປະໂຫຍດ, ເພື່ອຄອບຄົວ ແລະ ຕາມປະເພນີ;

ຄ. ສະຫຼຸບລາຍງານ ຜົນການຈັດຕັ້ງປະຕິບັດວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ອົງການປົກຄອງບ້ານ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເປັນແຕ່ລະໄລຍະ;

ຈ. ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ສົມທົບກັບອົງການປົກຄອງບ້ານ ຕິດຕາມກວດກາ ການຈັດຕັ້ງປະຕິບັດກິດຈະກຳ ຢ່າງເປັນປົກກະຕິ.

## IV. ກົນໄກການປະສານງານ

ເພີ່ມທະວີ ເອົາໃຈໃສ່ສ້າງກົນໄກການປະສານງານ ລະຫວ່າງ ຂະແໜງການກ່ຽວຂ້ອງ ຂອງພາກລັດ, ຄູ່ຮ່ວມພັດທະນາ, ພາກທຸລະກິດ ແລະ ປະຊາຊົນ ເພື່ອສ້າງຄວາມເຂັ້ມແຂງໃຫ້ອົງການປົກຄອງບ້ານ ແລະ ປະຊາຊົນໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້, ປູກ ແລະ ຟື້ນຟູບູລະນະປ່າໄມ້ ໃຫ້ມີຄວາມອຸດົມສົມບູນ ໃນຂອບເຂດການຄຸ້ມຄອງຂອງບ້ານ ຕາມທິດສີຂຽວ ແລະ ຍືນຍົງ.

## V. ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດ

1. ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນເຈົ້າການປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່, ຝຶກອົບຮົມ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ຄຳແນະນຳ ສະບັບນີ້ໃຫ້ໄດ້ຮັບຜົນດີ;
2. ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ອົງການປົກຄອງບ້ານເປັນເຈົ້າການປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ດຳເນີນການຈັດຕັ້ງປະຕິບັດການຄຸ້ມຄອງປ່າໄມ້ຂັ້ນບ້ານ ຕາມຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ;
3. ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ໃຫ້ ກົມປ່າໄມ້ ຊາບເປັນແຕ່ລະໄລຍະ;
4. ກົມປ່າໄມ້ ເປັນເຈົ້າການ ສ້າງລະບົບຖານຂໍ້ມູນ ກ່ຽວກັບ ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ;
5. ໃນການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານ ກະຊວງກະສິກຳ ແລະ ປ່າໄມ້ ຕາມຂັ້ນຕອນ ເພື່ອພິຈາລະນາຫາວິທີແກ້ໄຂ ຢ່າງທັນການ.

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

ປອ. ເພັດ ພົມພິພັກ

ປມບ 1

# ແບບພິມ ເກັບກຳຂໍ້ມູນດ້ານເສດຖະກິດ-ສັງຄົມ ຂອງບ້ານ

ຊື່ຜູ້ຖືກສຳພາດ
.............................................................................................................
ໜ້າທີ່ຮັບຜິດຊອບ.............................................ວັນ, ເດືອນ, ປີສຳພາດ.................
...............

**1. ປະຫວັດຄວາມເປັນມາຂອງບ້ານ**

**2. ທີ່ຕັ້ງ ແລະ ຂອບເຂດຊາຍແດນຂອງບ້ານ**

.........................................................................................................................
.........................................................................................................................
.........................................................................................................................
.........................................................................................................................
.........................................................................................................................
.........................................................................................................................
.......................

- ➢ ຂອບເຂດຄຸ້ມຄອງຂອງບ້ານ
- ທິດເໜືອຕິດກັບ
  .............................................................................................
- ທິດໃຕ້ຕິດກັບ
  ...............................................................................................
- ທິດຕາເວັນອອກຕິດກັບ
  ......................................................................................
- ທິດຕາເວັນຕົກຕິດກັບ
  ...............................................................................................

**3. ສະພາບພົນລະເມືອງ**

- ຈຳນວນຫຼັງຄາເຮືອນ...............................ຫຼັງຄາເຮືອນ, ຈຳນວນຄອບຄົວ.................. ຄອບຄົວ
- ຈຳນວນພົນລະເມືອງ.........................................ຄົນ, ຈຳນວນເພດຍິງ........................... ຄົນ
- ອາຍຸຕໍ່າກວ່າ 15 ປີ ຈຳນວນ..............ຄົນ, ເທົ່າກັບ...........ສ່ວນຮ້ອຍ, ໃນນີ້ ເພດຍິງ............. ຄົນ
- ອາຍຸລະຫ່ວາງ 15-25 ປີ ຈຳນວນ.........ຄົນ, ເທົ່າກັບ...........ສ່ວນຮ້ອຍ, ໃນນີ້ ເພດຍິງ............. ຄົນ
- ອາຍຸລະຫ່ວາງ 26-55 ປີ ຈຳນວນ.........ຄົນ, ເທົ່າກັບ...........ສ່ວນຮ້ອຍ, ໃນນີ້ ເພດຍິງ............. ຄົນ
- ອາຍຸແຕ່ 56 ປີ ຂຶ້ນໄປ ຈຳນວນ...........ຄົນ, ເທົ່າກັບ............ສ່ວນຮ້ອຍ, ໃນນີ້ ເພດຍິງ............. ຄົນ
- ຊົນເຜົ່າ
  - ເຜົ່າ...............................ຈຳນວນ........ຄົນ, ເທົ່າກັບ........ສ່ວນຮ້ອຍ, ໃນນີ້ ເພດຍິງ...... ຄົນ

- ເຜົ່າ..............................ຈຳນວນ........ຄົນ, ເທົ່າກັບ........ສ່ວນຮ້ອຍ, ໃນນີ້ ເພດຍິງ...... ຄົນ
- ເຜົ່າ..............................ຈຳນວນ........ຄົນ, ເທົ່າກັບ........ສ່ວນຮ້ອຍ, ໃນນີ້ ເພດຍິງ...... ຄົນ
- ເຜົ່າ..............................ຈຳນວນ........ຄົນ, ເທົ່າກັບ........ສ່ວນຮ້ອຍ, ໃນນີ້ ເພດຍິງ...... ຄົນ
- ເຜົ່າ..............................ຈຳນວນ........ຄົນ, ເທົ່າກັບ........ສ່ວນຮ້ອຍ, ໃນນີ້ ເພດຍິງ...... ຄົນ
- ເຜົ່າ..............................ຈຳນວນ........ຄົນ, ເທົ່າກັບ........ສ່ວນຮ້ອຍ, ໃນນີ້ ເພດຍິງ...... ຄົນ
- ..................................................................................................

- ສາສະໜາ
  - ສາສະໜາ........................ຈຳນວນ........ຄົນ, ເທົ່າກັບ...........ສ່ວນຮ້ອຍ, ໃນນີ້ ເພດຍິງ...... ຄົນ
  - ສາສະໜາ........................ຈຳນວນ........ຄົນ, ເທົ່າກັບ...........ສ່ວນຮ້ອຍ, ໃນນີ້ ເພດຍິງ...... ຄົນ
  - ສາສະໜາ........................ຈຳນວນ........ຄົນ, ເທົ່າກັບ...........ສ່ວນຮ້ອຍ, ໃນນີ້ ເພດຍິງ...... ຄົນ
  - ສາສະໜາ........................ຈຳນວນ........ຄົນ, ເທົ່າກັບ...........ສ່ວນຮ້ອຍ, ໃນນີ້ ເພດຍິງ...... ຄົນ
  - ສາສະໜາ........................ຈຳນວນ........ຄົນ, ເທົ່າກັບ...........ສ່ວນຮ້ອຍ, ໃນນີ້ ເພດຍິງ...... ຄົນ
  - ..................................................................................................
- ຄອບຄົວພົ້ນທຸກມີ ຈຳນວນ..................................ຄອບຄົວ, ເທົ່າກັບ...................ສ່ວນຮ້ອຍ
- ຄອບຄົວກຸ້ມກິນ ຈຳນວນ........................ຄອບຄົວ, ເທົ່າກັບ.......................ສ່ວນຮ້ອຍ
- ຄອບຄົວບໍ່ພົ້ນທຸກ ຈຳນວນ.......................ຄອບຄົວ, ເທົ່າກັບ.......................ສ່ວນຮ້ອຍ

**4. ອົງການຈັດຕັ້ງບ້ານ**

- ຈຳນວນຄະນະພັກຮາກຖານ.............ສະຫາຍ, ຈຳນວນໜ່ວຍພັກ...........ໜ່ວຍ, ສະມາຊິກພັກ .............ສະຫາຍ, ຍິງ.........ສະຫາຍ, ສຳຮອງ..........ສະຫາຍ, ຍິງ........... ສະຫາຍ
- ຄະນະບ້ານ...............................................ທ່ານ, ຍິງ.....................................ທ່ານ
- ອົງການຈັດຕັ້ງ ປກສ.................................ທ່ານ, ຍິງ.....................................ທ່ານ
- ອົງການຈັດຕັ້ງ ປກຊ.................................ທ່ານ, ຍິງ.....................................ທ່ານ
- ອົງການຈັດຕັ້ງ ຊາວໜຸ່ມ.............................ທ່ານ, ຍິງ.....................................ທ່ານ
- ອົງການຈັດຕັ້ງ ແມ່ຍິງ.................................ທ່ານ, ຍິງ.....................................ທ່ານ
- ອົງການຈັດຕັ້ງ ສະຫະພັນນັກຮົບເກົ່າ.................ທ່ານ, ຍິງ.....................................ທ່ານ
- ກອງທຶນ ແລະ ກຸ່ມຕ່າງໆຂອງບ້ານ
  - ຊື່ກຸ່ມ/ກອງທຶນ.........................., ຈຳນວນສະມາຊິກ...........ທ່ານ, ຍິງ.........ທ່ານ
  - ຊື່ກຸ່ມ/ກອງທຶນ.........................., ຈຳນວນສະມາຊິກ...........ທ່ານ, ຍິງ.........ທ່ານ
  - ຊື່ກຸ່ມ/ກອງທຶນ.........................., ຈຳນວນສະມາຊິກ...........ທ່ານ, ຍິງ.........ທ່ານ

## 5. ການປະກອບອາຊີບຂອງປະຊາຊົນພາຍໃນບ້ານ

| ລ/ດ | ອາຊີບ | ຈຳນວນ ຄອບຄົວ | ໝາຍເຫດ |
|---|---|---|---|
| 1 | | | |
| 2 | | | |
| 3 | | | |
| 4 | | | |
| 5 | | | |
| ... | | | |

## 6. ຮີດຄອງ,ປະເພນີ, ວັດທະນາທຳ ແລະ ທ່ອງທ່ຽວ

..................................................................................................................
..................................................................................................................
..................................................................................................................
..................................................................................................................
..................................................................................................................
..........................................................................

## 7. ວຽກງານການສຶກສາ

- ໂຮງຮຽນລ້ຽງເດັກ/ອະນຸບານ ຈຳນວນ..........ຫຼັງ, ຫ້ອງຮຽນ..........ຫ້ອງ, ນັກຮຽນ.........ຄົນ, ຍິງ ...........ຄົນ, ອາຈານ/ຄູສອນ.............ຄົນ, ຍິງ............ຄົນ;
- ໂຮງຮຽນປະຖົມ...........ຫຼັງ, ຫ້ອງຮຽນ..........ຫ້ອງ, ນັກຮຽນ............ຄົນ, ຍິງ.........ຄົນ, ອາຈານ/ຄູສອນ...................ຄົນ, ຍິງ.............................ຄົນ;
- ໂຮງຮຽນມັດທະຍົມຕົ້ນ..........ຫຼັງ, ຫ້ອງຮຽນ........ຫ້ອງ, ນັກຮຽນ........ຄົນ, ຍິງ.........ຄົນ, ອາຈານ/ຄູສອນ..................ຄົນ, ຍິງ...........................ຄົນ;
- ໂຮງຮຽນມັດທະຍົມສົມບູນ........ຫຼັງ, ຫ້ອງຮຽນ.......ຫ້ອງ, ນັກຮຽນ.........ຄົນ, ຍິງ.......ຄົນ, ອາຈານ/ຄູສອນ......................ຄົນ, ຍິງ.....................ຄົນ;

## 8. ໂຍທາທິການ ແລະ ໂທລະຄົມມະນາຄົມ

- ເສັ້ນທາງ...............ເສັ້ນ, ສະພາບຂອງເສັ້ນທາງ: ປູຢາງ □v, ທາງແດງ □v, ລົດແລ່ນໄດ້ຕະຫລອດປີ □v, ລົດແລ່ນໄດ້ແຕ່ລະດູແລ້ງ □v, ມີເສັ້ນທາງທີ່ເດີນທາງນ້ຳ.......................
- ລົດບັນທຸກສິນຄ້າ.......ຄັນ, ລົດໄຖໃຫ່ຍ...... ຄັນ, ລົດກະບະ........ ຄັນ, ລົດຈັກ....... ຄັນ, ລົດໄຖນາເດີນຕາມ...... ຄັນ, ລົດກະບະຣຸນໄດ...... ຄັນ, ລົດໂດຍສານ....... ຄັນລົດປັ່ນເຂົ້າ....... ຄັນ, ເຮືອນຈັກຫາງຍາວ ..... ລຳ, ເຮືອພາຍ....... ລຳ, ລົດຖີບ...... ຄັນ, ລໍ້ຍູ້ ......ຄັນ, ເຮືອຂ້າມແດນ...... ລຳ, ເຮືອໂດຍສານ....... ລຳ,
- ໄຟຟ້າ □v, ບໍ່ມີ□, ແຮງຕ່ຳ □, ແຮງກາງ □v, ແຮງສູງ □, ປ້ຳນ້ຳມັນອື່ອ....ປ້ຳ, ຊີງຊັ້ງ....ໜ່ວຍ, ຫົວໜ່ວຍທຸລະກິດ....... ໜ່ວຍ, ມີດ່ານທ້ອງຖິ່ນ.....ຈຸດ, ສ້າງເກັບສິນຄ້າ.....ຫລັງ, ຮ້ານຄ້າຂາຍຍ່ອຍ .......ຮ້ານ, ຮ້ານສ້ອມແປງລົດ..... ຮ້ານ, ບ້ານພັກ.... ຫລັງ, ໂຮງສີເຂົ້າ.....ໂຮງ, ຮ້ານອາຫານ ແລະ ກິນດື່ມ..... ແຫ່ງ, ໂຮງງານ....... ແຫ່ງ, 1......................; 2.........................; 3.....................; ມີໂທລະໂຄ່ງ....ຊຸດ, ມີສັນຍານໂທລະສັບເຄືອຂ່າຍ............., ສັນຍານຊັດເຈນດີ □v, ບໍ່ຊັດເຈນ □, ອິນເຕີເນັດສັນຍານຊັດເຈນດີ □v, ບໍ່ຊັດເຈນ□,

## 9. ສາທາລະນາສຸກ

- ➢ ພາຍໃນບ້ານມີສາທາລະນາສຸກ? ມີ □v, ບໍ່ມີ □, ຖ້າມີໂຮງໝໍຕັ້ງຢູ່ໄກປານໃດ......... ? ແມ່ດ, ຜູ້ຍິງ ແລະ ເດັກນ້ອຍສັກຢາ ແລະ ຢອດຢາ ........%?, ພາຍໃນບ້ານມີແຫລ່ງນ້ຳກິນມາຈາກໃສ ສາຍນ້ຳປຸຍ ໄລຍະທາງ 1 ກມ, ນ້ຳປະປາ v,□, ນ້ຳບາດານ □v, ນ້ຳລິນ □, ນ້ຳສ້າງ □v, ສາຍນ້ຳ ພຽງ, ໄດ້ນຳໃຊ້ ຖ່າຍ %?

  ພາຍໃນບ້ານມີເສັ້ນທາງ ...... ເສັ້ນ, ສະພາບຂອງເສັ້ນທາງ: ປູຢາງ □v, ທາງແດງ □v, ລົດແລ່ນໄດ້ ຕະຫລອດປີ □v, ລົດແລ່ນໄດ້ແຕ່ລະດູແລ້ງ □v, ມີເສັ້ນທາງທີ່ເດີນທາງນ້ຳບໍ່ມີ, ຖ້າມີ

## 10. ການປູກຝັງ ແລະ ລ້ຽງສັດ

### ➢ ການປູກຝັງ

| ການປູກຝັງ | ເນື້ອທີ່ ຮຕ | ຈຳນວນ ຄອບຄົວ | ຜົນຜະລິດ/ຮຕ | ສະມັດຕະພາບ | ໝາຍເຫດ |
|---|---|---|---|---|---|
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |

### ➢ ລ້ຽງສັດ

| ສັດລ້ຽງ | ຈຳນວນຄອບຄົວທີ່ລ້ຽງ | ຈຳນວນໂຕ | ໝາຍເຫດ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |

## 11. ປະເພດການນຳໃຊ້ທີ່ດິນຂອງບ້ານ

ບ້ານມີການມອບດິນມອບປ່າແລ້ວບໍ່? ມອບແລ້ວ, □√, ຍັງບໍ່ທັນມອບ□, ໃນປີໃດ................?, ແມ່ນໜ່ວຍງານໃດ.........................?

| ລ/ດ | ປະເພດການນຳໃຊ້ທີ່ດິນ | ເນື້ອທີ່ (ເຮັກຕາ) | ໝາຍເຫດ |
|---|---|---|---|
| 1 | | | |
| 2 | | | |
| 3 | | | |
| 4 | | | |
| 5 | | | |
| ... | | | |

## 12. ລາຍຮັບສະເລ່ຍຂອງປະຊາຊົນພາຍໃນບ້ານ

### ➢ ລາຍຮັບຈາກພືດກະສິກຳ

| ລ/ດ | ປະເພດພືກກະສິກຳທີ່ຂາຍ | ຈຳນວນkg | ລາຄາຂາຍ kg | ເປັນເງິນກີບ | ໝາຍເຫດ |
|---|---|---|---|---|---|

| | | | | | |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| 4 | | | | | |
| 5 | | | | | |
| ... | | | | | |

- **ລາຍຮັບຈາກເຄື່ອງປ່າຂອງດົງ**

| ລ/ດ | ລາຍການ | ຈຳນວນ kg | ລາຄາຂາຍ kg | ເປັນເງິນກີບ | ໝາຍເຫດ |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| 4 | | | | | |
| 5 | | | | | |
| ... | | | | | |

ທີ່ບ້ານ............................, ວັນທີ.................................

**ລາຍເຊັນ ຜູ້ຖືກສຳພາດ** **ລາຍເຊັນຜູ້ສຳພາດ**

**ຮັບຮູ້ ແລະ ຢັ້ງຢືນຈາກນາຍບ້ານ**
**(ກໍລະນີຜູ້ຖືກສຳພາດບໍ່ແມ່ນນາຍບ້ານ)**

ປມບ 2

# ແບບພິມ ເກັບກຳຂໍ້ມູນ ການນຳໃຊ້ໄມ້

ຜູ້ສຳພາດ ຊື່ ແລະ ນາມສະກຸນ..............................., ອາຍຸ............ປີ, ອາຊີບ..................... ບ່ອນປະຈຳການ................, ໜ້າທີ່ຮັບຜິດຊອບ......................ວັນ, ເດືອນ, ປີ ສຳພາດ..........

| ລ/ດ | ຊະນິດໄມ້ | ເຂດພື້ນທີ່ເກັບ | ຈຳນວນ | | | ວິທີການນຳໃຊ້ | | | ໝາຍເຫດ |
|---|---|---|---|---|---|---|---|---|---|
| | | | ຫລາຍ | ປານກາງ | ໜ້ອຍ | ຂາຍ | ຊົມໃຊ້ | ຫັດຖະກຳ | |
| 1 | | | | | | | | | |
| 2 | | | | | | | | | |
| 3 | | | | | | | | | |
| 4 | | | | | | | | | |
| 5 | | | | | | | | | |
| 6 | | | | | | | | | |
| 7 | | | | | | | | | |
| 8 | | | | | | | | | |
| 9 | | | | | | | | | |
| 10 | | | | | | | | | |
| 11 | | | | | | | | | |
| 12 | | | | | | | | | |
| 13 | | | | | | | | | |
| 14 | | | | | | | | | |

ທີ່ບ້ານ.............................., ວັນທີ....................................

**ລາຍເຊັນ ຜູ້ຖືກສຳພາດ** **ລາຍເຊັນຜູ້ສຳພາດ**

ປມບ 3

# ແບບພິມ ເກັບກຳຂໍ້ມູນ ເຄື່ອງປ່າຂອງດົງ

ຜູ້ສຳພາດ ຊື່ ແລະ ນາມສະກຸນ..............................., ອາຍຸ......ປີ, ອາຊີບ..........................ບ່ອນປະຈຳການ.................., ໜ້າທີ່ຮັບຜິດຊອບ.................ວັນ, ເດືອນ, ປີ ສຳພາດ..............

| ລ/ດ | ເຄື່ອງປ່າຂອງດົງ | ເຂດພື້ນທີ່ | ຈຳນວນ | | | ວິທີການນຳໃຊ້ | | | ໝາຍເຫດ |
|---|---|---|---|---|---|---|---|---|---|
| | | | ຫລາຍ | ປານກາງ | ໜ້ອຍ | ຂາຍ | ຊົມໃຊ້ | ຫັດຖະກຳ | |
| 1 | | | | | | | | | |
| 2 | | | | | | | | | |
| 3 | | | | | | | | | |
| 4 | | | | | | | | | |
| 5 | | | | | | | | | |
| 6 | | | | | | | | | |
| 7 | | | | | | | | | |
| 8 | | | | | | | | | |
| 9 | | | | | | | | | |
| 10 | | | | | | | | | |
| 11 | | | | | | | | | |
| 12 | | | | | | | | | |
| 13 | | | | | | | | | |
| 14 | | | | | | | | | |

ທີ່ບ້ານ............................., ວັນທີ..................................

**ລາຍເຊັນ ຜູ້ຖືກສຳພາດ** **ລາຍເຊັນຜູ້ສຳພາດ**

**ປມບ 4**

## ແບບພິມ ເກັບກຳຂໍ້ມູນການນຳໃຊ້ທີ່ດິນ ໃນຂອບເຂດປ່າໄມ້ ແລະ ທີ່ດິນປ່າໄມ້

ເຂດບ້ານ......................................, ເມືອງ..............................., ແຂວງ.........................,

ຄອບຄົວ............................................., ນຳໃຊ້ທີ່ດິນເຂດປ່າ: ☐ ປ່າຊົມໃຊ້ຂອງບ້ານ, ☐ ປ່າສະຫງວນ,

☐ ປ່າປ້ອງກັນ ແລະ ອື່ນໆ (ລະບຸລະອຽດ)..................................................................................

| ປະເພດການນໍາໃຊ້ທີ່ດິນ | ເນື້ອທີ່ ຂອງແຕ່ລະຕອນດິນ (ຮຕ) | ຈໍານວນຕອນ | ທີ່ມາຂອງການນໍາໃຊ້ທີ່ດິນແຕ່ລະຕອນ ພ້ອມລະບຸ ປີໃດ? | ທີ່ຕັ້ງຕອນດິນ (ເຂດຊື່ທ້ອງຖິ່ນເອີ້ນກັນ, ປະເພດປ່າ) |
|---|---|---|---|---|
| | ຕອນທີ 1, ເນື້ອທີ່....ຮຕ<br>ຕອນທີ 2, ເນື້ອທີ່....ຮຕ<br>......................... | ...........<br>...........<br>........... | .......................<br>.......................<br>....................... | ..............................<br>..............................<br>.............................. |
| | | ...........<br>...........<br>........... | .......................<br>.......................<br>....................... | ..............................<br>..............................<br>.............................. |
| | | ...........<br>...........<br>........... | .......................<br>.......................<br>....................... | ..............................<br>..............................<br>.............................. |
| | | ...........<br>...........<br>........... | .......................<br>.......................<br>....................... | ..............................<br>..............................<br>.............................. |
| | | ...........<br>...........<br>........... | .......................<br>.......................<br>....................... | ..............................<br>..............................<br>.............................. |

ວັນທີ, ເດືອນ, ປີ............................

**ຢັ້ງຢືນນາຍບ້ານ** **ຜູ້ບັນທຶກເກັບກໍາຂໍ້ມູນ**

ປມບ 5

# ໂຄງຮ່າງ ແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ

**ໜ້າປົກ: ແຜນຄຸ້ມຄອງປ່າໄມ້ ບ້ານ................**
**ແຜນທີ່ການນຳໃຊ້ທີ່ດິນຂອງບ້ານ**

**ພາກທີ I ສະພາບລວມຂອງບ້ານ**

1.1 ທີ່ຕັ້ງ ແລະ ຄວາມເປັນມາ ຂອງບ້ານ

1.2 ສະພາບ ເສດຖະກິດ-ສັງຄົມ

**ພາກທີ II ປະເພດປ່າໄມ້ ແລະ ທີ່ດິນປ່າໄມ້ (ໃນປະຈຸບັນ)**

2.1 ປະເພດປ່າໄມ້ ແລະ ທີ່ດິນປ່າໄມ້

2.2 ສະພາບການນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້
- ຂໍ້ມູນການໄດ້ຮັບສິດນຳໃຊ້ທີ່ດິນປ່າໄມ້ຂອງປະຊາຊົນ ໃນແຕ່ລະປະເພດປ່າ

2.3 ການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ແຕ່ລະປະເພດ ໃນເຂດຄຸ້ມຄອງຂອງບ້ານ
- ປ່າຊົມໃຊ້ຂອງບ້ານ
- ປ່າສະຫງວນ ລວມມີ ປ່າສັກສິດ ແລະ ປ່າຊ້າ
- ປ່າປ້ອງກັນ ລວມມີປ່າຍອດນ້ຳ, ປ່າແຄມນ້ຳ, ປ່າແຄມທາງ
- ເຂດປ່າໄມ້ເຊື່ອມໂຊມ ໃນແຕ່ລະປະເພດປ່າ
- ພື້ນທີ່ການນຳໃຊ້ທີ່ດິນປະເພດອື່ນ

2.4 ສະແດງແຜນທີ່ ປະເພດປ່າໄມ້ ແລະ ທີ່ດິນປ່າໄມ້

2.5 ນະໂຍບາຍຕໍ່ປະຊາຊົນທີ່ມີຜົນກະທົບຕໍ່ການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້

**ພາກທີ III ການປະຕິບັດແຜນ** (ການວາງແຜນ ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້)

3.1 ວຽກຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້,

3.2 ວຽກປູກ ແລະ ຟື້ນຟູປ່າໄມ້ ແລະ ເຄື່ອງປ່າຂອງດົງ,

3.3 ການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ;

3.4 ການກວດກາ ການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ;

3.5 ການປະຕິບັດນະໂຍບາຍຕໍ່ປະຊາຊົນທີ່ມີຜົນກະທົບທາງລົບ

3.6 ຕິດຕາມ ການປະຕິບັດມາດຕະການຕ່າງໆຕໍ່ປະຊາຊົນທີ່ມີຜົນກະທົບທາງລົບ

**ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ** **ນາຍບ້ານ**

**ເອກະສານແບບທ້າຍຂອງແຜນຈັດສັນ**

- ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງ ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດການເງິນບ້ານ ຫຼື ກຸ່ມປົກປັກຮັກສາປ່າໄມ້.
- ຂໍ້ຕົກລົງ ວ່າດ້ວຍລະບຽບການຄຸ້ມຄອງປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຂອງບ້ານ.
- ແຜນທີ່ ສະແດງຂອບເຂດ ແລະ ຈຸດທີ່ຕັ້ງຂອງບ້ານ (ແຜນທີ່ພູມີປະເທດ)
- ແຜນທີ່ ສະພາບປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງບ້ານ ໃນປະຈຸບັນ
- ແຜນທີ່ ການວາງແຜນຄຸ້ມຄອງ, ພັດທະນາ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຂອງບ້ານ
- ເອກະສານອື່ນໆ ທີ່ກ່ຽວຂ້ອງ
- ຂໍ້ມູນເສດຖະກິດ-ສັງຄົມ ຂອງບ້ານ (ແບບພິມ ປມບ 1)
- ການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ (ແບບພິມ ປມບ 2)
- ຂໍ້ມູນສັດນ້ຳ-ສັດປ່າ (ແບບພິມ ປມບ 3)
- ແບບຟອມ ການນຳໃຊ້ທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນເຂດປ່າໄມ້ (ແບບພິມ ປມບ 4)
- ໂຄງຮ່າງ ແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ (ແບບພິມ ປມບ 5)
- ຮ່າງລະບຽບການຄຸ້ມຄອງ, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງບ້ານ (ແບບພິມ ປມບ 6)
- ຮ່າງສັນຍາ ການປູກໄມ້, ເຄື່ອງປ່າຂອງດົງ ແລະ ຟື້ນຟູປ່າ (ແບບພິມ ປມບ 7)

ປມບ 6

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ..........................
ເມືອງ ..........................

ເລກທີ ............/............
ທີ່...................., ລົງວັນທີ .........................

# ຮ່າງ ກົດລະບຽບ
## ວ່າດ້ວຍການຄຸ້ມຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້, ສັດນ້ຳ-ສັດປ່າ
## ຂອງບ້ານ .................., ເມືອງ .................., ແຂວງ ..........................

- ອີງຕາມ ກົດໝາຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019
- ອີງຕາມ ກົດໝາຍ.......................................................................................
- ອີງຕາມ ....................................................................................................
- ອີງຕາມ ການຄົ້ນຄວ້າ ແລະ ຕົກລົງເຫັນດີເປັນເອກະພາບ ໃນກອງປະຊຸມບ້ານ ຄັ້ງວັນທີ.........

ເພື່ອເຮັດໃຫ້ການຄຸ້ມຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງບ້ານ ໃຫ້ຖືກຕ້ອງຕາມທິດທາງນະໂຍບາຍຂອງພັກ ແລະ ລັດຖະບານ ແລະ ເພື່ອແນ່ໃສ່ການຄຸ້ມຄອງ, ປົກຮັກຮັກສາ, ພັດທະນາ, ນຳໃຊ້ ໃຫ້ຍືນຍົງ ແລະ ທັງເປັນການແກ້ໄຂ, ປັບປຸງຊີວິດ ການເປັນຢູ່ຂອງປະຊາຊົນບັນດາເຜົ່າພາຍໃນບ້ານ ໃຫ້ຫຼຸດຜ່ອນຄວາມທຸກຍາກໄປເທື່ອລະກ້າວ;

ອີງການປົກຄອງບ້ານ ທຸກພາກສ່ວນ ພ້ອມດ້ວຍເຖົ້າແກ່ແນວໂຮມ ແລະ ປະຊາຊົນ ຈຶ່ງເປັນເອກະພາບຮ່ວມກັນສ້າງລະບຽບວ່າດ້ວຍການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ມີຢູ່ພາຍໃນບ້ານ ໃນຄັ້ງວັນທີ ......................... ລາຍລະອຽດລຸ່ມນີ້:

# ພາກທີ I
## ວ່າດ້ວຍທີ່ຕັ້ງ ແລະ ຂອບເຂດຄຸ້ມຄອງຂອງບ້ານ

**ມາດຕາ 1 ວ່າດ້ວຍເຂດຄຸ້ມຄອງທີ່ຕັ້ງຂອງບ້ານ**

ບ້ານ .............................. ມີຂອບເຂດຕິດກັບ ............. ບ້ານຄື:

- ທິດເໜືອ ( N ) ຕິດກັບ ..........................................................
- ທິດຕາເວັນອອກ ( E ) ຕິດກັບ ..........................................................
- ທິດໃຕ້ ( S ) ຕິດກັບ ..........................................................
- ທິດຕາເວັນຕົກ ( W ) ຕິດກັບ ..........................................................

**ມາດຕາ 2** ວ່າດ້ວຍການຄຸ້ມຄອງ-ນຳໃຊ້ ຂອງປະຊາຊົນ ພາຍໃນບ້ານ ...................... ທີ່ໄດ້ຈັດແບ່ງປະເພດການນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ໄດ້ມອບໃຫ້ບ້ານເປັນຜູ້ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ແບບຍືນຍົງ ມີເນື້ອທີ່ທັງໝົດ .......................... ເຮັກຕາ, ຊຶ່ງມີລາຍລະອຽດລຸ່ມນີ້:

..........................................................................................................................................................

..........................................................................................................................................................

..........................................................................................................................................................

..........................................................................................................................................................

..........................................................................................................................................................

....................................................................................................

## ພາກທີ II
## ວ່າດ້ວຍການວາງກົດລະບຽບ
## ກ່ຽວກັບການຄຸ້ມຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້

**ມາດຕາ 3** ວ່າດ້ວຍການວາງກົດລະບຽບ ໃນການຄຸ້ມຄອງນຳໃຊ້ ປະເພດປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງບ້ານ ສິດ ແລະ ພັນທະຂອງປະຊາຊົນພາຍໃນບ້ານ ແມ່ນມີສິດສະເໝີພາບ ໃນການຄຸ້ມຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມເງື່ອນໄຂສະພາບຂອງແຕ່ລະຄອບຄົວ, ທຸກຄົນຕ້ອງເປັນເຈົ້າການ ໃນການປົກປັກຮັກສາ, ຟື້ນຟູ, ບູລະ ນະ ຊຶ່ງລະອຽດມີດັ່ງນີ້:

1. ຫ້າມຂຸດຄົ້ນໄມ້ ຫຼື ຕັດໄມ້ທຸກຊະນິດ ແລະ ຫ້າມບຸກລຸກຈັບຈອງເນື້ອທີ່ດິນທຳການຜະລິດ ຢູ່ໃນຂອບເຂດປ່າສະຫງວນ ແລະ ປ່າປ້ອງກັນ, ຢ່າງເດັດຂາດ, (ສ່ວນເຄື່ອງປ່າຂອງດົງ ທີ່ນອນຢູ່ໃນເຂດປ່າສະຫງວນ, ເຂດປ່າປ້ອງກັນ ຂອງບ້ານ ຕ້ອງໄດ້ເກັບກູ້ຕາມລະດູການ ຫຼື ເກັບແບບບໍ່ດັບສູນ);
2. ເຂດປ່າຊົມໃຊ້ຂອງບ້ານ ແມ່ນອະນຸຍາດໃຫ້ປະຊາຊົນເຂົ້າເກັບກູ້ເຄື່ອງປ່າຂອງດົງ, ເກັບຜັກຫາໜໍ່, ນຳໃຊ້ໄມ້ປ່ອງ, ໄມ້ກິ່ງງ່າ ແລະ ໄມ້ຟືນ ເພື່ອຮັບໃຊ້ຊີວິດການເປັນຢູ່ ຂອງປະຊາຊົນພາຍໃນບ້ານ ຕາມຮີດຄອງປະເພນີ ແລະ ລະບຽບກົດໝາຍ, (ສ່ວນການເລື່ອຍໄມ້ປຸກສ້າງ ທີ່ມີຄວາມຈຳເປັນ ແມ່ນໃຫ້ສະເໜີ ຈຸງານກະສິກຳ ແລະ ປ່າໄມ້ບ້ານ ແລ້ວນຳສະເໜີ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຄົ້ນຄ້ວາພິຈາລະນາຕາມລະບຽບການ);
3. ຫ້າມເກັບກູ້ເຄື່ອງປ່າຂອງດົງແບບດັບສູນ ແລະ ເຄື່ອງປ່າຂອງດົງ ທີ່ໃກ້ສູນພັນ;
4. ຫ້າມຈູດປ່າຊະຊາຍ ເພື່ອປ້ອງກັນບໍ່ໃຫ້ເກີດໄຟໄໝ້ລາມປ່າ;
5. ຫ້າມບຸກຄົນ, ຄອບຄົວຖາງປ່າເຮັດໄຮ່ ໃນເຂດທີ່ບໍ່ໄດ້ກຳນົດໃຫ້ ຫຼື ໄດ້ຮັບອະນຸຍາດຈາກ ຈຸງານກະສິກຳ ແລະ ປ່າໄມ້ບ້ານ, ອີງການທີ່ກ່ຽວຂ້ອງຖ້າລະເມີດຈະຖືກປັບໃໝ ຕາມລະບຽບການທີ່ວາງອອກ;
6. ຫ້າມຂຸດຄົ້ນ, ເກັບຊື້ໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ;
7. ສ່ວນຄົນບ້ານອື່ນ ທີ່ຕ້ອງການນຳໃຊ້ໄມ້ ໃນເຂດປ່າຊົມໃຊ້ຂອງບ້ານ ແລະ ເຄື່ອງປ່າຂອງດົງ ພາຍໃນບ້ານຕ້ອງປະຕິບັດດັ່ງນີ້:

- ຕ້ອງໄດ້ສະເໜີຜ່ານອຳນາດການປົກຄອງບ້ານ ຫຼື ຈຸງານກະສິກຳ ແລະ ປ່າໄມ້ບ້ານ ເພື່ອພິຈາລະນາ;
- ປະເພດໄມ້ກົມ, ໄມ້ຄ້ຳແບບ, ໄມ້ຟືນ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ຕ້ອງໄດ້ເສຍພັນທະໃຫ້ບ້ານ ຕາມຄວາມເໝາະສົມ;
- ປະເພດໄມ້ໃຫຍ່ ທີ່ມີໜ້າກວ້າງແຕ່ 30 ຊັງຕີແມັດ ຂຶ້ນໄປ ແມ່ນຄະນະຮັບຜິດຊອບ ຈຸງານກະສິກຳ ແລະ ປ່າໄມ້ບ້ານ ພິຈາລະນາ ແລ້ວນຳສະເໜີຫາ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຜູ້ພິຈາລະນາແກ້ໄຂຕາມລະບຽບການ.

**ມາດຕາ 4** ວ່າດ້ວຍການວາງລະບຽບໃນການຄຸ້ມຄອງນຳໃຊ້ປະເພດສັດນ້ຳ, ສັດປ່າ ທີ່ຄຸ້ມຄອງ ແລະ ຫວງຫ້າມ

1. ຫ້າມບໍ່ໃຫ້ ລ່າສັດນ້ຳ ໃນຍາມປາຂຶ້ນໄຂ່ (ປາອໍ) ສັດປ່າ ໃນຍາມຖືພາ (ເຂົ້າພັນສາ) ຢ່າງເດັດຂາດ;
2. ຫ້າມຊື້ຂາຍສັດປ່າ ປະເພດຄຸ້ມຄອງ ແລະ ຫວງຫ້າມຢ່າງເດັດຂາດ;

3. ຫ້າມຫາປາ ໃນເຂດຫວງຫ້າມ ແລະ ນຳໃຊ້ ອຸປະກອນທີ່ມີລັກສະນະດັບສູນ ເຊັ່ນ: ລະເບີດ, ຢາເບື່ອ, ໜໍ້ຊອດ ຢ່າງເດັດຂາດ ຖ້າເຈົ້າໜ້າທີ່ພົບເຫັນຈະຖືກປັບໃໝ ຕາມລະບຽບການທີ່ອ້າງໄວ້.

# ພາກທີ III
# ວ່າດ້ວຍມາດຕະການຕໍ່ຜູ້ລະເມີດ ໃນການນຳໃຊ້ ປ່າໄມ້ ແລະທີ່ດິນປ່າໄມ້ ພາຍໃນບ້ານ ແລະ ຍ້ອງຍໍຜູ້ທີ່ມີຜົນງານ

**ມາດຕາ 5** ມາດຕະການຕໍ່ຜູ້ລະເມີດ

❖ **ລະເມີດ ຕໍ່ການຄຸ້ມຄອງໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ປະເພດຕ່າງໆ.**

1. ບຸກຄົນ ຫຼື ຄອບຄົວໃດຈູດປ່າໄມ້, ເຂດຄຸ້ມຄອງນຳໃຊ້ ເຄື່ອງປ່າຂອງດົງ ເຮັດໃຫ້ໄຟໄໝ້ລາມ ຈະຖືກປັບໄໝດັ່ງນີ້:
- ກໍລະນີ 1 ຈູດປ່າໄມ້ ແລະ ເຂດເກັບກູ້ ເຄື່ອງປ່າຂອງດົງ ເຊັ່ນ: ຈູດໄຮ່, ຈູດສວນ, ຈູດປ່າເພື່ອລ່າສັດ, ຈູດໃຫ້ມີຫຍ້າລ້ຽງສັດ ແລະ ອື່ນໆ ແມ່ນໃຫ້ປັບໃໝ ..................... ກີບ/ເຮັກຕາ;
- ກໍລະນີຈູດປ່າ ເຮັດໃຫ້ໄຟໄໝ້ລາມທົ່ງນາ, ຖຽງນາ, ເຮືອນຊານຜູ້ອື່ນ ປັບໄໝຕາມມູນຄ່າເສຍຫາຍຕົວຈິງ ກໍລະນີຮ້າຍແຮງກວ່ານັ້ນ ແມ່ນສົ່ງໃຫ້ເຈົ້າໜ້າທີ່ ດຳເນີນຄະດີ;
2. ຖ້າບ້ານອື່ນ ຫາກມາລັກລອບເກັບກູ້ເຄື່ອງປ່າຂອງດົງ ທີ່ເກີດຕາມທຳມະຊາດ ໃນເຂດຄຸ້ມຄອງຂອງບ້ານ ແມ່ນຈະໄດ້ປັບໃໝ ຕາມລາຄາຕົວຈິງຂອງທ້ອງຕະຫຼາດ ພ້ອມທັງຢຶດຂອງກາງ;
3. ບຸກຄົນ ຫຼື ຄອບຄົວ ຫາກລັກລອບເກັບກູ້ເຄື່ອງປ່າຂອງດົງ ທີ່ບຸກຄົນປູກ ແມ່ນຈະຖືກປັບໃໝ ຕາມລາຄາຕົວຈິງຂອງທ້ອງຕະຫຼາດ ພ້ອມທັງຢຶດຂອງກາງ.

❖ **ລະເມີດຕໍ່ລະບຽບການຄຸ້ມຄອງນຳໃຊ້ ປະເພດປ່າໄມ້ ແລະ ທີ່ດິນປ່າໄມ້ ຕ່າງໆ.**

1. ບຸກຄົນ, ຄອບຄົວ ຫຼື ນິຕິບຸກຄົນ ເລື່ອຍໄມ້ ປະເພດທີ່ຄຸ້ມຄອງ ແລະ ຫວງຫ້າມ (ໄມ້ທີ່ເກີດຈາກທຳມະຊາດ) ໂດຍບໍ່ໄດ້ຮັບອະນຸຍາດ ແມ່ນຈະຖືກປັບໃໝ 1 ແມັດກ້ອນຕໍ່ ............ ກີບ; ພ້ອມທັງຢຶດຂອງກາງ ແລະ ດຳເນີນຄະດີຕາມລະບຽບການ;
2. ບຸກຄົນ, ຄອບຄົວໃດບຸກລຸກຖາງປ່າເຮັດໄຮ່, ສວນ ໃນເຂດປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຊົມໃຊ້ຂອງບ້ານ ແມ່ນຈະຖືກປັບ ໃໝ .....................ກີບ/ເຮັກຕາ ແລະ ຄິດໄລ່ລາຄາ ດັ່ງນີ້:
   - ໜ້າຕັດໄມ້ທີ່ຖືກຖາງແຕ່ 3-10 ຊັງຕີແມັດ 1 ຕົ້ນ/................. ກີບ;
   - ໜ້າຕັດໄມ້ທີ່ຖືກຖາງແຕ່ 11-15 ຊັງຕີແມັດ 1 ຕົ້ນ/.................. ກີບ;
   - ໜ້າຕັດໄມ້ທີ່ຖືກຖາງແຕ່ 16-30 ຊັງຕີແມັດ 1 ຕົ້ນ/..................ກີບ;
   - ໜ້າຕັດໄມ້ທີ່ຖືກຖາງແຕ່ 31 ຊັງຕີແມັດຂຶ້ນໄປ 1 ຕົ້ນ/..............ກີບ.
3. ບຸກຄົນ, ຄອບຄົວ ມີຈັກຕັດໄມ້ໄວ້ຄອບຄອງ ໂດຍບໍ່ຖືກຕ້ອງຕາມລະບຽບການ ຈະຖືກປັບໃໝ 1 ເຄື່ອງ/...................... ກີບ, ຖ້າພົບເຫັນຄັ້ງທີ 2 ແມ່ນຈະຖືກປັບໃໝສອງເທົ່າຕົວຂອງຄັ້ງທີ 1 ພ້ອມທັງຢຶດຂອງກາງປະກອບຄະດີ ສົ່ງໃຫ້ຂັ້ນເມືອງ;
4. ບຸກຄົນ, ຄອບຄົວ ທຳລາຍ ຫຼື ຍ້າຍບ່ອນ ເຄື່ອງໝາຍ, ປ້າຍຕ່າງໆ, ແຜນວາດຂອງບ້ານ ຈະຖືກປັບໃໝຄື:
   - ຄັ້ງທີ 1 ຈະຖືກປັບໃໝ ................... ກີບ/ປ້າຍ;
   - ຄັ້ງທີ 2 ປັບໃໝຄູນ 2 ຂອງມູນຄ່າຄັ້ງທີ 1.

❖ **ການລະເມີດຕໍ່ການຄຸ້ມຄອງ, ນຳໃຊ້ສັດນ້ຳ ແລະ ສັດປ່າ.**

ບຸກຄົນ ແລະ ນິຕິບຸກຄົນ ທີ່ລ່າສັດນ້ຳ ແລະ ສັດປ່າ ປະເພດຄຸ້ມຄອງ ແລະ ຫວງຫ້າມ ແມ່ນຈະຖືກປັບໃໝດັ່ງລຸ່ມນີ້:

- ນຳໃຊ້ລະເບີດ, ສານເຄມີ, ຢາເບື່ອປາ ປັບໃໝ ................. ກີບ/ຄັ້ງພ້ອມທັງຍຶດຂອງກາງ ແລະ ປະຕິບັດຕາມລະບຽບກົດໝາຍ;
- ນຳໃຊ້ເຄື່ອງຊັອດປາ ຈະຖືກປັບໃໝ ........................ ກີບ/ຄັ້ງ ພ້ອມທັງຍຶດຂອງກາງ ແລະ ປະຕິບັດຕາມລະບຽບກົດໝາຍ;
- ຫາປາຂອບເຂດວັງຫວງຫ້າມ ດວ້ຍການໃຊ້ອຸປະກອນຕ່າງໆເຊັ່ນ: ໝ້າກາກ, ມອງ, ແຫ, ເບັດ ຫຼື ອຸປະກອນອື່ນໆແມ່ນຈະປັບໃໝ .................... ກີບ/ຄົນ/ຄັ້ງ, ພ້ອມທັງຍຶດຂອງກາງ ຖ້າພົບເຫັນຄັ້ງທີ່ສອງປັບໃໝຄູນສອງຂອງຄັ້ງທີ່ໜຶ່ງພ້ອມທັງຍຶດຂອງກາງ;
- ຖ້າຫາກພົບເຫັນລ່າສັດປະເພດຄຸ້ມຄອງ ແລະ ຫວງຫ້າມ ໂດຍບໍ່ໄດ້ຮັບອະນຸຍາດແມ່ນຈະຖືກດຳເນີນຄະດີຕາມລະບຽບການ.

**ມາດຕາ 6** ນະໂຍບາຍຕໍ່ຜູ້ມີຜົນງານ.

ຜູ້ທີ່ມີຜົນງານດີເດັ່ນ ໃນການຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ແບບຍືນຍົງ ຈະໄດ້ຮັບການນຳສະເໜີຍ້ອງຍໍ. ກໍລະນີເປັນພົນລະເມືອງດີ ໄດ້ລາຍງານການກະທຳຜິດ ແມ່ນຈະໄດ້ຮັບຄ່ານຳເນັດ ...........; ຜູ້ຈັດຕັ້ງປະຕິບັດ .......... ແລະ ............. ມອບເຂົ້າກອງທຶນບ້ານ ຂອງມູນຄ່າປັບໃໝ.

**ມາດຕາ 7** ກົດລະບຽບ ວ່າດ້ວຍການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ຂັ້ນບ້ານ ສະບັບນີ້ ສາມາດປ່ຽນແປງໄດ້ ຖ້າຫາກວ່າບາງຂໍ້ ຍັງບໍ່ແທດເໝາະກັບສະພາບການຄຸ້ມຄອງນຳໃຊ້ຕົວຈິງ, ອີງການຈັດຕັ້ງເຖົ້າແກ່ແນວໂຮມ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈະເປັນຜູ້ຄົ້ນຄວ້າ ແລະ ນຳສະເໜີແກ້ໄຂປັບປຸງຄືນໃໝ່ໄດ້.

**ມາດຕາ 8** ກົດລະບຽບສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

| | |
|---|---|
| **ເຫັນດີ ແລະ ຮັບຮູ້** | **ຢັ້ງຢືນ** |
| **ເຈົ້າເມືອງ** | **ນາຍບ້ານໆ ......................** |

ປມບ 7

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ.................
ເມືອງ...................
ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ                    ເລກທີ............./...........
ເມືອງ.................., ວັນທີ........./......./........

# ສັນຍາ

## ວ່າດ້ວຍ...............................................................................
## ທີ່ ບ້ານ........................., ເມືອງ......................,ແຂວງ.......................

- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ..........................................................................................
- ອີງຕາມ..........................................................................................
- ອີງຕາມ ການລົງຈັດຕັ້ງປະຕິບັດ ວຽກງານວາງແຜນຄຸ້ມຄອງປ່າໄມ້ບ້ານ..............................

**ສັນຍາສະບັບນີ້ສ້າງຂຶ້ນ ລະຫວ່າງ**

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.........................., ມີສຳນັກງານຕັ້ງຢູ່ ບ້ານ.............., ເມືອງ .........................., ແຂວງ............................., ເບີໂທ:...................................

***ແລະ***

ປະຊາຊົນ ບ້ານ.........................ເອີ້ນວ່າ: " ກຸ່ມ......................." ທັງສອງຝ່າຍໄດ້ຕົກລົງ ເຫັນດີຮ່ວມກັນ.............................., ຢູ່ບ້ານ..................., ເມືອງ.......................

**ທັງສອງຝ່າຍ ໄດ້ຕົກລົງເຫັນດີເຮັດສັນຍາຮ່ວມກັນ ດັ່ງນີ້:**

**ມາດຕາ 1 ວ່າດ້ວຍສິດ ແລະ ໜ້າທີ່ຂອງແຕ່ລະຝ່າຍ**

**1.1 ຫ້ອງການກະສິກາ ແລະປ່າໄມ້ເມືອງ**

..........................................................................................................
..........................................................................................................
.........................................................................................

**1.2 ຜູ້ຮ່ວມສັນຍາ**

..........................................................................................................
..........................................................................................................
.........................................................................................

**ມາດຕາ 2 ວ່າດ້ວຍ ຂອບເຂດ ແລະ ວິທີການ..............................**

**2.1 ຂອບເຂດ..........................**

..........................................................................................................................

..........................................................................................................................

....................................................................................................

**2.2 ວິທີການ...........................**

..........................................................................................................................

..........................................................................................................................

....................................................................................................

**ມາດຕາ 3 ການຊຳລະຄ່າຊຸກຍູ້**

..........................................................................................................................

..........................................................................................................................

..........................................................................................................................

....................................................................................................

**ມາດຕາ 4** ໃນກໍລະນີຄູ່ຮ່ວມສັນຍາຫາກບໍ່ປະຕິບັດຕາມສັນຍາສະບັບນີ້, ຖ້າຫາກມີຜົນເສຍຫາຍເກີດຂຶ້ນ ທັງສອງຝ່າຍ ຕ້ອງໄດ້ປຶກສາຫາລືຊອກທາງອອກຮ່ວມກັນ. ໃນກໍລະນີທີ່ຮ້າຍແຮງ ແລະ ບໍ່ສາມາດແກ້ໄຂຮ່ວມກັນໄດ້ນັ້ນ ຈະຕ້ອງໄດ້ປະຕິບັດຕາມຂັ້ນຕອນລະບຽບ ແລະ ກົດໝາຍຂອງບ້ານເມືອງ. ແຕ່ໃນກໍລະນີຜູ້ທີ່ໄດ້ເຊັນສັນຍາຮ່ວມ ໃນສັນຍາສະບັບນີ້ແລ້ວ ແມ່ນຫ້າມບໍ່ໃຫ້ມີການປ່ຽນແທນ ຫຼື ໂອນກຳມະສິດໃຫ້ຜູ້ອື່ນປະຕິບັດແທນຕົນ ໂດຍບໍ່ໄດ້ຮັບອະນຸຍາດຈາກຄູ່ຮ່ວມສັນຍາ ຢ່າງເດັດຂາດ.

**ມາດຕາ 5** ສັນຍາສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ທັງສອງຝ່າຍໄດ້ລົງລາຍເຊັນຮ່ວມກັນ.

**ລາຍເຊັນ ນາຍບ້ານ ແລະ ປະທັບຕາ**

**ລາຍເຊັນ ຜູ້ຮ່ວມສັນຍາ**

1. ...............................................
2. ...............................................
3. ...............................................

**ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**